ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.
*****໐໐໐*****

ທະນາຄານສົ່ງເສີມກະສິກໍາ
Agricultural Promotion Bank

ເລກທີ: 230 /ທສກ
ນະຄອນຫຼວງວຽງຈັນ, ວັນທີ: 30 JUL 2019

# ປະກາດແຈ້ງການ
# ຮັບສະໝັກພະນັກງານ ໄອທີ (IT)

ເຖິງ: ບັນດາ ທ່ານ ຜູ້ທີ່ມີຄວາມສົນໃຈຕ້ອງການວຽກເຮັດງານທໍາ

ທະນາຄານສົ່ງເສີມກະສິກໍາ ທສກ ສໍານັກງານໃຫຍ່ ມີຄວາມຕ້ອງການພະນັກງານ ໄອທີ (IT) ເພດຍິງ ແລະ ເພດຊາຍ ທີ່ເປັນສັນຊາດລາວ, ຜູ້ທີ່ມີຄວາມຫ້າວຫັນ, ດຸໝັ່ນ ແລະ ຮັກວຽກທີ່ຕົນສະໝັກ ຕາມເງື່ອນໄຂດັ່ງນີ້.

## I. ພະນັກງານ ພັດທະນາໂປຣແກຣມ 4 ຕໍາແໜ່ງ.

### ❖ ເງື່ອນໄຂຜູ້ສະໝັກ: ເພດຍິງ ຫຼື ຊາຍ ມີອາຍຸ 18 ປີຂຶ້ນໄປ ແລະ ບໍ່ເກີນ 35 ປີ

1. ມີໃບປະກາດຈົບຊັ້ນ ປະລິນຍາຕີຂຶ້ນໄປ ໃນສາຂາ ວິທະຍາສາດຄອມພິວເຕີ, ວິສະວະກໍາຄອມພິວເຕີເຕັກໂນໂລຊີຂໍ້ມູນຂ່າວສານ (IT) ຈາກພາຍໃນ ແລະ ຕ່າງປະເທດ. (ສ່ວນນັກສຶກສາທີ່ລໍຖ້າຮັບໃບປະກາດແມ່ນຕ້ອງມີໃບຢັ້ງຢືນຮຽນຈົບຈາກໂຮງຮຽນ ທີ່ກ່ຽວຂ້ອງ)
2. ມີຜົນການຮຽນ GPA ແຕ່ 2.5/4.00 ຂຶ້ນໄປ ແລະ ແຕ່ລະພາກຮຽນວິຊາ Programming ມີຄະແນນ B ຂຶ້ນໄປ.
3. ສາມາດສື່ສານພາສາອັງກິດ (ເວົ້າ, ຂຽນ, ອ່ານ) ໄດ້ໃນລະດັບດີ.
4. ສາມາດນໍາໃຊ້ຖານຂໍ້ມູນ: Oracle ແລະ ຖານຂໍ້ມູນອື່ນໆໄດ້ດີ.
5. ສາມາດພັດທະນາລະບົບ Application ເຊື່ອມຕໍ່ຖານຂໍ້ມູນໄດ້.
6. ສາມາດພັດທະນາລະບົບ Application ນໍາໃຊ້ໂປຼແກຣມ Xcode, Xamarin, Android studio, Visual studio ແລະ ຂຽນພາສາ Java, C# ໃນລະດັບດີ.
7. ມີຄວາມຮູ້, ປະສົບການໃນການພັດທະນາ Mobile Application (Android & IOS), Web Application.
8. ມີໃບຢັ້ງຢືນໃນການຂຽນໂປຣແກຣມ Mobile Application, Web Application ແລະ ໃບຢັ້ງຢືນອື່ນໆ ທີ່ກ່ຽວຂ້ອງກັບໂປຣແກຣມ ຍິ່ງເປັນການດີ.

### ❖ ຄຸນລັກສະນະຂອງຜູ້ສະໝັກງານ:

1. ມີທັດສະນະຫລັກໝັ້ນ, ມີແນວຄວາມຄິດເອກະພາບກັບການນໍາພາຂອງພັກ-ລັດ.
2. ຊື່ສັດບໍລິສຸດຕໍ່ໜ້າທີ່ວຽກງານ, ມີມະນຸດສໍາພັນ ແລະ ມີທັກສະນະການສື່ສານທີ່ດີ.
3. ຕົງຕໍ່ເວລາ, ມີຄວາມຮັບຜິດຊອບສູງ ແລະ ມີນໍ້າໃຈເສຍສະຫລະຕໍ່ວຽກສ່ວນລວມ.
4. ມີພອນສະຫວັນ, ມີຄວາມສະດຸ້ງໄວ ແລະ ມີຈິດໃຈຮັກວຽກງານ IT ແລະ ເຄື່ອງເອເລັກໂຕຼນິກ.
5. ມີຈັນຍາບັນບໍ່ເປີດເຜີຍຄວາມລັບຂອງອົງກອນອອກສູ່ພາຍນອກ.
6. ມີຄວາມສາມັກຄີ ແລະ ສາມາດເຮັດວຽກຮ່ວມກັບທີມງານໄດ້.
7. ມີລະບຽບວິໄນ ແລະ ສຸພາບອ່ອນໂຍນ.

8. ມີສຸຂະພາບແຂງແຮງ, ສາມາດເຮັດວຽກ ໃນ-ນອກໂມງການໄດ້ ແລະ ມີຄວາມເສຍສະຫຼະສູງ
9. ມີຈິດໃຈບຸກບືນຫ້າວຫັນ, ອົດທົນ.
10. ສາມາດປັບປຸງໜ້າວຽກຂອງຕົນທີ່ການຈັດຕັ້ງມອບໝາຍໃນແຕ່ລະໄລຍະ.
11. ບໍ່ຖືກສານຕັດສິນລົງໂທດ ຫຼື ຕັດອິດສະຫຼະພາບ ແລະ ຖືກອອກຈາກການຈັດຕັ້ງອື່ນມາກ່ອນໂດຍມີ ຄວາມຜິດທາງວິໄນ.

❖ **ເອກະສານປະກອບ**

1. ໃບຄໍາຮ້ອງຂຽນດ້ວຍຕົນເອງ
2. ປະຫວັດຫຍໍ້ 4 ໜ້າ ຂອງຜູ້ກ່ຽວ
3. ບັດປະຈໍາຕົວ ແລະ ປຶ້ມສໍາມະໂນຄົວ
4. ໃບແຈ້ງໂທດຈາກສານບໍ່ເກີນ 3 ເດືອນ
5. ໃບປະກາດ ແລະ ໃບຄະແນນປະລິນຍາຕີຂຶ້ນໄປ.
6. ໃບຢັ້ງຢືນທີ່ຢູ່
7. ໃບກວດກາສຸຂະພາບ
8. ໃບຢັ້ງຢືນຜູ້ປົກຄອງ ( ໃບຄໍ້າປະກັນ )
9. ຮູບຂະໜາດ 3x4 ຈໍານວນ 03 ໃບ ( ບໍ່ເກີນ 03 ເດືອນ )

ສະນັ້ນ ທ່ານໃດມີຄວາມສົນໃຈ ໃຫ້ມາພົວພັນປະກອບເອກະສານສະໝັກ ຢູ່ທີ່ ພະແນກຈັດຕັ້ງ ແລະ ພະນັກງານ ຊັ້ນ 5 ທະນາຄານ ສົ່ງເສີມກະສິກໍາສໍານັກງານໃຫຍ່, ທ່ານສາມາດຕິດຕາມຂໍ້ມູນຈາກ ເວັບໄຊ: www.APB.com.la ໜັງສືພິມວຽງຈັນໃໝ່ ແລະ ໜັງສືພິມປະຊາຊົນ, ປະກາດຢູ່ລາຍການວິທະຍຸ ທີ່ ທະນາຄານ ສົ່ງເສີມກະສິກໍາ ມີສັນຍານ.

ເປີດ ແລະ ປິດ ຮັບສະໝັກວັນທີ 01 -26/08/2019 ( ໂທ 030 5409092, 030 5458373 )

ງ.ຈ ຜູ້ອໍານວຍການ
ທະນາຄານສົ່ງເສີມກະສິກໍາ

ທະນາຄານແຫ່ງ ສປປ ລາວ
ທະນາຄານສົ່ງເສີມກະສິກໍາ
ສໍານັກງານໃຫຍ່
AGRICUL TURAL PROMOTION
BANK HEAD OFFICE

ຄໍາສິງ ແສງແກ້ວມະຫາວົງ